# ສົນທິສັນຍາສະບັບເລກທີ່ 182

# ວ່າດ້ວຍການຫ້າມແລະ ການດຳເນີນການລົບລ້າງການນຳໃຊ້ແຮງງານເດັກໃນຮູບແບບທີ່ຮ້າຍແຮງທີ່ສຸດໂດຍທັນທີ.

ກອງປະຊຸມໃຫ່ຍຂອງອົງການແຮງງານສາກົນໄດ້ຈັດຂື້ນໂດຍຄະນະບໍລິຫານຂອງອົງການແຮງງານສາກົນ ແລະ ໄດ້ໄຂກອງປະຊຸມສະໄຫມສາມັນຄັ້ງທີ່ 87 ຂອງຕົນເມື່ອວັນທີ່ 1 ມິຖຸນາ 1999

ໂດຍພິຈາລະນາເຫັນເຖິງຄວາມຈຳເປັນໃນການຮັບຮອງເອົາສົນທິສັນຍາສະບັບໃຫມ່ກ່ຽວກັບການຫ້າມ ແລະ ການລົບລ້າງຮູບແບບການໃຊ້ແຮງງານເດັກທີ່ທາລຸນທີ່ສຸດ, ໃນນາມເປັນບູລິມະສິດຕົ້ນຕໍສຳລັບແຜນດຳເນີນງານລະດັບຊາດ ແລະ ລະດັບສາກົນ, ລວມທັງການຮ່ວມມືແລະການຊວ່ຍເຫຼືອຂອງສາກົນເພື່ອເພີ້ມເຕີມໃຫ້ແກ່ສົນທິສັນຍາ ແລະ ຂໍ້ສະເຫນີແນະນຳກ່ຽວກັບອາຍຸຕ່ຳສຸດຂອງການຮັບຈ້າງງານ, 1973 ຊື່ງຍັງຖືເປັນສົນທິສັນຍາພື້ນຖານດ້ານແຮງງານເດັກ ແລະ

ໂດຍພິຈາລະນາເຫັນວ່າການລົບລ້າງຮູບແບບການໃຊ້ແຮງງານເດັກທີ່ທາລຸນທີ່ສຸດຢ່າງມີປະສິດທິຜົນທີ່ສຸດນັ້ນມັນຮຽກຮອ້ງໃຫ້ມີການດຳເນີນງານຢ່າງຮີບດ່ວນ ແລະ ຄົບວົງຈອນ, ໂດຍຄຳນືງເຖີງຄວາມສຳຄັນຂອງການສຶກສາຂັ້ນພື້ນຖານ ແບບບໍ່ເສຍຄາ ແລະ ຄວາມຈຳເປັນໃນການຊ່ວຍເຫຼືອໃຫ້ເດັກຫຼຸດພົ້ນອອກຈາກການອອກແຮງງານດັ່ງກ່າວ ແລະ ໃຫ້ພື້ນຟູປົວແປງ ແລະ ເອົາເຂົ້າສູ່ສັງຄົມຄືນໃນເມື່ອພິຈາລະນາບັນຫາຄວາມຈຳເປັນຂອງຄອບຄົວຂອງເດັກເຫຼົ່ານັ້ນ, ແລະ

ໂດຍທວນຄືນເຖິງຍັດຕິການລົບລ້າງແຮງງານເດັກຊຶ່ງຮັບຮອງເອົາໂດຍກອງ
ປະຊຸມໃຫຍ່ອົງການ
ແຮງງານສາກົນ ໃນກອງປະຊຸມສະໄຫມສາມັນຄັ້ງທີ່ 83 ໃນປີ 1996, ແລະ

ໂດຍການຮັບຮູ້ວ່າແຮງງານເດັກຕົ້ນຕໍແມ່ນເກີດຈາກຄວາມຍາກຈົນ ແລະ
ການແກ້ໄຂໄລຍະຍາວ
ແມ່ນອີງໃສ່ການຂະຫຍາຍຕົວທາງດ້ານເສດຖະກິດທີ່ຕໍ່ເນື້ອງກ້າວໄປເຖິງເຮັດໃຫ້ສັ
ງຄົມກ້າວຫນ້າໂດຍສະ
ເພາະຢ່າງຍິ່ງຈະມີການແກ້ໄຂບັນຫາຄວາມຍາກຈົນ ແລະ
ໃຫ້ການສຶກສາທີ່ໄດ້ມາດຕະຖານສາກົນ, ແລະ

ໂດຍທວນຄືນເຖິງສິດທິຂອງເດັກຊຶ່ງຮັບຮອງເອົາໂດຍສະມັດຊາໃຫຍ່
ສະຫະປະຊາຊາດເມື່ອວັນທີ່
20 ພະຈິກ 1989, ແລະ

ໂດຍທວນຄືນເຖິງຖະແຫຼງການຂອງອົງການແຮງງານສາກົນວ່າດ້ວຍຫຼັກກາ
ນ ແລະສິດທິພື້ນຖານ
ໃນການເຮັດວຽກ ແລະ
ການຈັດຕັ້ງປະຕິບັດຊຶ່ງຮັບຮອງໂດຍກອງປະຊຸມໃຫຍ່ຂອງອົງການແຮງງານສາກົນ
ໃນກອງປະຊຸມສະໄຫມສາມັນຄັ້ງທີ່ 86, ປີ 1998, ແລະ

ໂດຍທວນຄືນວ່າບາງຮູບແບບການໃຊ້ແຮງງານເດັກທີ່ຫາລຸນທີ່ສຸດແມ່ນກາ
ນຄຸ້ມຄອງໂດຍບັນດາ
ສົນທິສັນຍາໂດຍສະເພາະຢ່າງຍິ່ງແມ່ນສົນທິສັນຍາວ່າດ້ວຍການອອກແຮງງານແບ
ບບັງຄັບ, ປີ 1930 ແລະ
ສົນທິສັນຍາເພີ່ມເຕີມຂອງອົງການສະຫະປະຊາຊາດວ່າດ້ວຍການຍົກເລີກຂ້າທາດ,
ການຄ້າຂ້າທາດ ແລະ
ສະຖາບັນຫຼື ການກະທໍາຕ່າງໆທີ່ມີລັກສະນະເຫມືອນເປັນຂ້າທາດ, ປີ 1956, ແລະ

ດ້ວຍການຕົກລົງເຫັນດີຕໍ່ບັນດາຂໍ້ສະເໜີກ່ຽວກັບແຮງງານເດັກຊຶ່ງເປັນຫົວຂໍ້ທີ່ 4 ໃນວາລະດຳເນີນ
ກອງປະຊຸມ, ແລະ

ໂດຍເຫັນວ່າບັນຫາຂໍ້ສະເໜີເຫຼົ່ານັ້ນຄວນສ້າງເປັນສົນທິສັນຍາສາກົນ,
ຊຶ່ງຮັບຮອງເອົາສົນທິສັນ
ຍາດັ່ງຕໍ່ໄປນີ້ ເມື່ອວັນທີ່ 17 ມິຖຸນາ 1999
ຊຶ່ງເອີ້ນວ່າສົນທິສັນຍາວ່າດ້ວຍການໃຊ້ແຮງງານເດັກໃນຮູບ
ແບບທີ່ຫາລຸນທີ່ສຸດ 1999.

## ມາດຕາ 1.

ລັດສະມາຊິກທີ່ໃຫ້ສັດຕະຍາບັນ
ສົນທິສັນຍາສະບັບນີ້ຈະຕ້ອງເອົາມາດຕະການໂດຍທັນທີ ແລະ
ມີປະສິດທິຜົນ ເພື່ອຮັບປະກັນການຫ້າມ ແລະ
ການລົບລ້າງຮູບແບບທີ່ຫາລຸນທີ່ສຸດຂອງການໃຊ້ແຮງງານ
ເດັກຊຶ່ງເປັນບັນຫາຮີບດ່ວນ.

## ມາດຕາ 2.

ເພື່ອຈຸດປະສົງຂອງສົນທິສັນຍາສະບັບນີ້ຄຳວ່າ “ເດັກ”
ຈະໃຊ້ຕໍ່ທຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ.

## ມາດຕາ 3.

ຈຸດປະສົງຂອງສົນທິສັນຍາສະບັບນີ້ຄຳວ່າ
“ຮູບແບບທີ່ຫາລຸນທີ່ສຸດຂອງການໃຊ້ແຮງງານເດັກ
ປະກອບດ້ວຍ:

ກ. ທຸກຮູບແບບຂອງການເປັນຂ້າທາດ ຫຼື ການກະທຳທີ່ຄ້າຍກັບຂ້າທາດເຊັ່ນ:ການຂາຍ ແລະ ການຄ້າເດັກ, ການໃຊ້ເດັກແທນໜີ້, ໃຊ້ເດັກແທນທີ່ດິນ, ການອອກແຮງງານບັງຄັບ ຫຼື ຮຽກ ເກນຊື່ງລວມເຖິງການບັງຄັບ ຫຼື ຮຽກເກນເດັກເພື່ອນຳໃຊ້ເຂົ້າໃນການປະທະກັນທາງອາວຸດ.

ຂ. ການນຳໃຊ້ການຈັດຫາ ຫຼື ການຈ່າວເດັກເພື່ອການຄ້າປະເວນີ ການຜະລິດສິ່ງລາມົກ ຫລື ການສະແດງແບບລາມົກ.

ຄ. ການນຳໃຊ້ການຈັດຫາ ຫລື ການຈ່າວເດັກ ເພື່ອກິດຈະກຳທີ່ຜິດກົດໝາຍ ໂດຍສະເພາະ ເພື່ອຜະລິດ ແລະ ຂົນສົ່ງຄ້າຂາຍຢາເສບຕິດຕາມທີ່ລະບຸໄວ້ໃນສົນທິສັນຍາສາກົນທີ່ກ່ຽວຂ້ອງ.

ງ. ວຽກຊື່ງອີງຕາມລັກສະນະຂອງວຽກ ຫລື ສະພາບແວດລ້ອມບ່ອນເຮັດວຽກທີ່ມີແນວໂນ້ມທີ່ຈະ ເປັນອັນຕະລາຍຕໍ່ສຸຂະພາບຄວາມປອດໄພ ຫລື ສິນລະທຳຂອງເດັກ.

## ມາດຕາ 4.

1. ປະເພດວຽກທີ່ກ່າວໃນມາດຕາ 3 (ງ) ຈະຖືກກຳນົດຂື້ນໂດຍລະບຽບກົດໝາຍພາຍໃນ ຫລືອົງການທີ່ມີສິດອຳນາດຂອງລັດພາຍຫລັງການປືກສາຫາລື ກັບການຈັດຕັ້ງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານທີ່ກ່ຽວຂ້ອງໂດຍຄຳນຶງເຖິງມາດຕະການສາກົນທີ່ກ່ຽວຂ້ອງໂດຍສະເພາະວັກ 3

ແລະ 4

ຂອງສົນທິສັນຍາວ່າດ້ວຍຮູບແບບທີ່ທາລຸນທີ່ສຸດຂອງການໃຊ້ແຮງງານເດັກ ປີ

1999.

2. ພາຍຫລັງປຶກສາຫາລືກັບການຈັດຕັ້ງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ, ອົງການທີ່ມີສິດອຳນາດ

ກຳນົດສະຖານທີ່ທີ່ມີປະເພດວຽກທີ່ກຳນົດຂື້ນນັ້ນ.

3. ບັນຊີປະເພດວຽກທີ່ກຳນົດຂື້ນຕາມວັກ 1 ຂອງມາດຕານີ້ຈະຖືກກວດກາ ແລະ ທົບທວນເປັນແຕ່

ລະໄລຍະຕາມຄວາມຈຳເປັນໂດຍມີການປຶກສາຫາລື

ກັບການຈັດຕັ້ງຜູ້ໃຊ້ແຮງງານ ແລະ ຜູ້ອອກ

ແຮງງານທີ່ກ່ຽວຂ້ອງ.

## ມາດຕາ 5.

ລັດສະມາຊິກ, ພາຍຫລັງປຶກສາຫາລືກັບການຈັດຕັ້ງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານທີ່

ກ່ຽວຂ້ອງຈະຕ້ອງສ້າງຕັ້ງ

ຫລືກຳນົດກົນໄກທີ່ເຫມາະສົມເພື່ອຕິດຕາມການປະຕິບັດຕາມຂໍ້ບັນຍັດກົດ

ໝາຍທີ່ເຮັດໃຫສັນຍາສະບັບນີ້ມີຜົນບັງຄັບປະຕິບັດ.

## ມາດຕາ 6.

1. ລັດສະມາຊິກຈະຕ້ອງວາງ ແລະປະຕິບັດແຜນດຳເນີນງານໂດຍຖືເປັນບູລະມະສິດເພື່ອລົບລ້າງ

ຮູບແບບທີ່ທາລຸນທີ່ສຸດຂອງການໃຊ້ແຮງງານເດັກ.

2. ແຜນດຳເນີນງານດັ່ງກ່າວຈະກຳນົດ ແລະປະຕິບັດໂດຍການປຶກສາຫາກັບອົງການທີ່ກ່ຽວຂ້ອງຂອງ

ລັດຖະບານ ແລະ ການຈັດຕັ້ງຜູ້ໃຊ້ແຮງງານ ແລະ
ຜູ້ອອກແຮງງານທີ່ກ່ຽວຂ້ອງ ໂດຍຄຳນຶງເຖິງ
ທັດສະນະ ຄຳເຫັນຂອງບັນດາພາກສ່ວນທີ່ກ່ຽວຂ້ອງອື່ນໆຕາມທີ່ສົມຄວນ.

## ມາດຕາ 7.

1. ລັດສະມາຊິກຈະຕ້ອງເອົາທຸກມາດຕະການທີ່ຈຳເປັນເພື່ອຄ້ຳປະກັນການຈັດຕັ້ງ ປະຕິບັດ ແລະ ບັງຄັບ ປະຕິບັດຢ່າງມີປະສິດທິຜົນບັນດາຂໍ້ກຳນົດກົດໝາຍທີ່ເຮັດໃຫ້ສົນທິສັນຍາມີຜົນບັງຄັບປະຕິບັດຊຶ່ງລວມທັງການກຳນົດ ແລະ ການປະຕິບັດໂທດທາງອາຍາ ຫຼືການລົງໂທດອື່ນໆຕາມທີ່ສົມຄວນ.
2. ໂດຍຄຳນຶງເຖິງການສຶກສາໃນການຊ່ວຍລົບລ້າງການໃຊ້ແຮງງານເດັກລັດສະ ມາຊິກຈະຕ້ອງເອົາມາດ ຕະການທີ່ມີຜົນສັກສິດ ແລະ ມີກຳນົດເວລາເພື່ອ:

ກ.

ສະກັດກັ້ນບໍ່ໃຫ້ເດັກເຂົ້າໄປເຮັດວຽກໃນຮູບແບບທີ່ທາລຸນທີ່ສຸດຂອງການໃຊ້ແຮງງານເດັກ.

ຂ. ໃຫ້ການຊ່ວຍເຫຼືອໂດຍກົງທີ່ຈຳເປັນ ແລະ ເໝາະສົມເພື່ອເອົາເດັກອອກຈາກຮູບແບບ ທີ່ທາລຸນທີ່ສຸດຂອງການນຳໃຊ້ແຮງງານເດັກ ແລະ ຟື້ນຟູ ແລະ ປົວແປງເຂົາເຈົ້າ ແລະ ເອົາ ເຂົາເຈົ້າເຂົ້າສູ່ສັງຄົມຄືນໃໝ່.

ຄ.

ຮັບປະກັນໃຫ້ເດັກທີ່ພົ້ນຈາກຮູບແບບທີ່ທາລຸນທີ່ສຸດຂອງການໃຊ້ແຮງງານເດັກໄດ້ຮັບການ

ສຶກສາຂັ້ນພື້ນຖານທີ່ບໍ່ເສຍຄ່າລວມທັງການຝຶກອົບຮົມດ້ານວິຊາຊີບໃນ
ກໍລະນີທີ່ເປັນໄປໄດ້ ແລະ ເໝາະສົມ.

ງ. ກຳນົດຕົວ ແລະ
ການໃຫ້ຄວາມຊ່ວຍເຫຼືອແກ່ເດັກທີ່ມີຄວາມສ່ຽງເປັນພິເສດ ແລະ.

ຈ. ຄຳນຶງເຖິງສະພາບຂອງເດັກຍິງເປັນພິເສດ.

໓. ລັດສະມາຊິກຈະກຳນົດອົງການທີ່ມີສິດອຳນາດທີ່ຮັບຜິດຊອບວຽກຈັດຕັ້
ງປະຕິບັດຂໍ້ກຳນົດ
ກົດໝາຍທີ່ເຮັດໃຫ້ສົນທິສັນຍາສະບັບນີ້ມີຜົນບັງຄັບປະຕິບັດ.

## ມາດຕາ ໘.

ລັດສະມາຊິກຈະດຳເນີນບາດກ້າວທີ່ເໝາະສົມເພື່ອຊ່ວຍເຫຼືອເຊິ່ງກັນ
ແລະ ກັນ ເພື່ອເຮັດ
ໃຫ້ສົນທິສັນຍາສະບັບນີ້ມີຜົນບັງຄັບປະຕິບັດ
ຜ່ານການເພີ່ມທະວີການຮ່ວມມືລະຫວ່າງປະເທດ
ແລະ /ຫຼື
ການຊ່ວຍເຫຼືອຂອງສາກົນຊຶ່ງລວມເຖິງການຊ່ວຍເຫຼືອໃນການພັດທະນາເສດຖ
ະກິດ ແລະ
ສັງຄົມ, ຜ່ານການລົບລ້າງຄວາມທຸກຈົນ ແລະ ການສຶກສາຢ່າງທົ່ວເຖິງ.

## ມາດຕາ ໙.

ການໃຫ້ສັດຕະຍາບັນສົນທິສັນຍາສະບັບນີ້ຈະຕ້ອງແຈ້ງໄປຍັງເອກອະທິບໍດີຂ
ອງຫ້ອງການແຮງງານ
ສາກົນເພື່ອຂຶ້ນທະບຽນ.

## ມາດຕາ10.

1. ສົນທິສັນຍາສະບັບນີ້ມີຜົນບັງຄັບໃຊ້ຕໍ່ລັດສະມາຊິກຂອງອົງການແຮງງານສ
າກົນທີ່ໄດ້ຂຶ້ນທະບຽນ

ນຳເອກອະທິບໍດີຫ້ອງການແຮງງານສາກົນກ່ຽວກັບການໃຫ້ສັດຕະຍາບັນສົນທິສັນຍາສະບັບນີ້.

2. ສົນທິສັນຍາສະບັບນີ້ມີຜົນບັງຄັບໃຊພາຍຫຼັງ 12 ເດືອນນັບແຕ່ມື້ມີລັດສະມາຊິກ 2 ປະເທດໄດ້ຂຶ້ນທະບຽນໃຫ້ສັດະຕາບັນຂອງຕົນນຳເອກອະທິບໍດີຫ້ອງການແຮງງານສາກົນ.

3. ຫຼັງຈາກນັ້ນ, ສົນທິສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ຕໍ່ລັດສະມາຊິກໃດໜຶ່ງພາຍຫຼັງ 12 ເດືອນນັບແຕ່ມື້ລັດສະມາຊິກນັ້ນໄດ້ໃຫ້ສັດຕະຍາບັນຂອງຕົນ.

## ມາດຕາ 11.

1. ລັດສະມາຊິກທີ່ໄດ້ໃຫ້ສັດຕະຍາບັນສົນທິສັນຍາສະບັບນີ້ສາມາດຖອນຕົວອອກໄດ້ພາຍຫຼັງ10ປີ ນັບແຕ່ມື້ສົນທິສັນຍາສະບັບນີ້ເລີ້ມມີຜົນບັງຄັບໃຊ້, ດ້ວຍການແຈ້ງເປັນລາຍລັກອັກສອນໄປຍັງເອກອະທິບໍດີຫ້ອງການແຮງງານສາກົນເພື່ອຈົດທະບຽນຖອນຕົວອອກຂອງຕົນ.

ການຖອນຕົວອອກດັ່ງກ່າວຈະມີຜົນສັກສິດພາຍຫຼັງ 1 ປີ ນັບແຕ່ມື້ຂຶ້ນທະບຽນການຖອນຕົວອອກດັ່ງກ່າວ.

2. ລັດສະມາຊິກທີ່ໃຫ້ສັດຕະຍາບັນສະບັບນີ້ ແລະ ບໍ່ໄດ້ໃຊ້ສິດຖອນຕົວອອກຕາມທີ່ກຳນົດໄວ້ໃນມາດຕານີ້. ພາຍໃນໄລຍະເວລາ 1 ປີ ຫຼັງຈາກມົດກຳນົດໄລຍະ 10 ປີ ທີ່ກ່າວຢູ່ໃນວັກ ເທົ່ານີ້ຈະມີຂໍ້ຜູກພັນຕໍ່ໄປພາຍໃນໄລຍະເວລາອີກ 10 ປີ ແລະ ຫຼັງຈາກນັ້ນຈິ່ງສາມາດຖອນຕົວອອກຈາກສົນທິສັນຍາ

ສະບັບນີ້ພາຍຫຼັງໝົດກຳນົດເວລາໄລຍະ 10 ປີ ແລະ ດັ່ງກ່າວຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນມາດຕານີ້.

## ມາດຕາ 12.

1. ເອກອະທິບໍດີຫ້ອງການແຮງງານສາກົນຈະຕ້ອງແຈ້ງໃຫ້ທາງລັດສະມາຊິກຂອງອົງການແຮງງານສາກົນກ່ຽວກັບການຂຶ້ນທະບຽນການໃຫ້ສັດຕະຍາບັນ ຫຼື ການແຈ້ງການການຖອນຕົວອອກຈາກສົນທິສັນຍາສະບັບນີ້.
2. ເມື່ອແຈ້ງໃຫ້ລັດສະມາຊິກຂອງອົງການແຮງງານສາກົນກ່ຽວກັບການຂຶ້ນທະບຽນການໃຫ້ສັດຕະຍາບັນສະບັບທີ່ສອງ ເອກອະທິບໍດີຈະຕ້ອງແຈ້ງໃຫ້ລັດສະມາຊິກຮູ້ກ່ຽວກັບມື້ທີ່ສົນທິສັນຍາສະບັບນີ້ຈະເລີ້ມມີຜົນບັງຄັບໃຊ້.

## ມາດຕາ 13.

ເອກອະທິບໍດີຫ້ອງການແຮງງານສາກົນຈະຕ້ອງແຈ້ງໄປຍັງເລຂາທິການອົງການສະຫະປະຊາຊາດ ເພື່ອຂຶ້ນທະບຽນໂດຍສອດຄ່ອງກັບມາດຕາ 102 ຂອງກົດບັດສະຫະປະຊາຊາດກ່ຽວກັບບັນທາລະອຽດການໃຫ້ສັດຕະຍາບັນ ແລະ ການແຈ້ງຖອນຕົວທີ່ໄດ້ຈົດທະບຽນ ໂດຍເອກອະທິບໍດີຕາມບົດບັນຍັດຂອງມາດຕາທີ່ຜ່ານມາ.

## ມາດຕາ 14.

ເມື່ອໃດຫາກເຫັນວ່າມີຄວາມຈຳເປັນຄະນະບໍລິຫານຫ້ອງການແຮງງານສາກົນສະເຫນີບົດລາຍງານຕໍ່ກອງປະຊຸມໃຫ່ຍກ່ຽວກັບການປະຕິບັດສົນທິສັນຍານີ້ພ້ອມທັງກຳນົດເບິ່ງຄວາມຈຳເປັນໃນການຈັດເອົາບັນຫາການທົບທວນສົນທິສັນຍາສະບັບນີ້ທັງຫມົດ ຫຼື ບາງສ່ວນເຂົ້າໃນວາລະດຳເນີນກອງປະຊຸມໃຫ່ຍ.

## ມາດຕາ 15.

1. ຖ້າວ່າກອງປະຊຸມໃຫ່ຍຫາກຮັບຮອງເອົາສົນທິສັນຍາສະບັບໃຫມ່ທີ່ທົບທວນສົນທິສັນຍາສະບັບສະເຫນີນີ້ທັງຫມົດ ຫຼື ບາງ ສ່ວນ

ຫາກວ່າສົນທິສັນຍາສະບັບໃຫມ່ຫາກບໍ່ລະບຸໄວ້ເປັນຢ່າງອື່ນຈະເຮັດໃຫ້:

ກ. ລັດທີ່ໃຫ້ສັດຕະຍາບັນສົນທິສັນຍາສະບັບໃຫມ່ໂດຍລັດສະມາຊິກຈະຖືເປັນການຖອນຕົວຂອງລັດດັ່ງກ່າວອອກຈາກສົນທິສັນຍາສະບັບເກົ່າໂດຍທັນທີ, ຖ້າວ່າ ແລະ ເມື່ອໃດສົນທິສັນຍາສະບັບທົບທວນໃຫມ່ນີ້ຈະມີຜົນບັງຄັບໃຊ້.

ຂ. ນັບແຕ່ມື້ທີ່ສົນທິສັນຍາສະເຫນີທົບທວນໃຫມ່ມີຜົນບັງຄັບໃຊ້ສົນທິສັນຍາສະບັບນີ້ຈະຢຸດຕິການເປີດໃຫ້ແກ່ການໃຫ້ສັດຕະຍາບັນໂດຍລັດສະມາຊິກຕ່າງໆ.

2. ສົນທິສັນຍາສະບັບນີ້ຈະຍັງມີຜົນບັງຄັບໃຊ້ຕໍ່ລັດສະມາຊິກທີ່ໄດ້ໃຫ້ສັດຕະຍາບັນໃນຮູບແບບ ແລະ
ເນື້ອໃນເດີມຖ້າວ່າລັດສະມາຊິກຍັງບໍ່ໄດ້ໃຫ້ສັດຕະຍາບັນສົນທິສັນຍາສະບັບທອນທົບໃຫມ່ດັ່ງກ່າວ.

## ມາດຕາ 1໖.

ສະບັບພາສາອັງກິດ ແລະ ຝຣັ່ງ
ຂອງສົນທິສັນຍາສະບັບນີ້ມີຄຸນຄ່າເທົ່າທຽມກັນ